ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 244 /ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2014

ເຖິງ: - ບັນດາພາກສ່ວນຕ່າງໆ ( ທັງພາກລັດ ແລະ ເອກະຊົນ)

- ວິສາຫະກິດທີ່ກ່ຽວຂ້ອງ

ເລື່ອງ: ແຈ້ງໂຈະການດຳເນີນທຸລະກິດຊົ່ວຄາວບັນດາວິສາຫະກິດທີ່ບໍ່ເຂົ້າໄປພົວພັນແຈ້ງເສຍອາກອນ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການສ່ວຍສາອາກອນ ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ແຈ້ງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ,ລົງວັນທີ 09 ກັນຍາ 2011;
- ອີງຕາມ ໜັງສືແຈ້ງໂຈະການເຄື່ອນໄຫວຫົວໜ່ວຍທຸລະກິດ ສະບັບເລກທີ 6178/ກງ.ກສອ, ລົງວັນທີ 1 ກັນຍາ 2014;
- ອີງຕາມ ໜັງສືແຈ້ງໃຫ້ວິສາຫະກິດເຂົ້າໄປແຈ້ງເສຍອາກອນ ເລກທີ 207/ຈທວ.ທຄວ.ອຄ, ລົງວັນທີ 02 ຕຸລາ 2014.

ບົນພື້ນຖານໃບສະເໜີ ສະບັບເລກທີ 6178/ກງ.ກສອ, ລົງວັນທີ 1 ກັນຍາ 2014, ເລື່ອງ: ແຈ້ງໂຈະການເຄື່ອນໄຫວຫົວໜ່ວຍທຸລະກິດ; ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ວິສາຫະກິດທີ່ມີລາຍຊື່ໃນຂໍ້04ຕາມແຈ້ງການສະບັບນີ້ໄດ້ຖືກໂຈະການດຳເນີນທຸລະກິດຊົ່ວຄາວໃນທຸກປະເພດທຸລະກິດ ຕາມທີ່ໄດ້ບົ່ງໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ;

2. ກຳນົດເວລາການໂຈະການດຳເນີນທຸລະກິດຊົ່ວຄາວ: ເລີ່ມແຕ່ວັນທີ 12 ພະຈິກ 2014 ເຖິງ ວັນທີ 12 ທັນວາ 2014;
3. ໃນໄລຍະການໂຈະການດຳເນີນທຸລະກິດຊົ່ວຄາວນີ້:
   3.1 ວິສາຫະກິດດັ່ງກ່າວ ຕ້ອງເຂົ້າໄປພົວພັນນຳເຈົ້າໜ້າທີ່ສ່ວຍສາອາກອນ (ກະຊວງການເງິນ) ເພື່ອແຈ້ງເສຍອາກອນໃຫ້ສຳເລັດ ແລ້ວນຳເອກະສານຢັ້ງຢືນການແຈ້ງເສຍອາກອນດັ່ງກ່າວມາແຈ້ງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມ ທຄວ;
   3.2 ຖ້າພົ້ນກຳນົດເວລາຕາມຂໍ້ 2 ເທິງນີ້ ເຈົ້າໜ້າທີ່ທະບຽນວິສາຫະກິດຈະແຈ້ງໂຈະການດຳເນີນທຸລະກິດຖາວອນ;
   3.3 ຫ້າມວິສາຫະກິດ ເຄື່ອນໄຫວດຳເນີນທຸລະກິດຢ່າງເດັດຂາດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເກັບຮັກສາໄວ້;
   3.4 ຖ້າຫາກລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ຈະຖືກປະຕິບັດມາດຕະ ການ ຕາມ ມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ໃຫ້ຍຸບເລີກ ຕາມຂັ້ນຕອນຂອງລະບຽບ ກົດໝາຍ.

4. ລາຍຊື່ວິສາຫະກິດ.

| ລ/ດ | ຊື່ວິສາຫະກິດ | ໃບທະບຽນ | | ໝາຍເຫດ |
|---|---|---|---|---|
| | | ເລກທີ | ລົງວັນທີ | |
| 1 | ໂຮງງານ ຜະລິດ ແລະ ປະກອບລົດ ວີເຄແອວເອ ຈຳກັດ | 0425/ຈທວ | 05/08/2013 | |
| 2 | ບໍລິສັດ ລົງຮົວ ເອຟ ໄອ ເອມ ຈຳກັດ | 0258/ຈທວ | 04/07/2014 | |
| 3 | ບໍລິສັດ ຢອນເຟີງ ການຄ້າສາກົນ ຈຳກັດຜູ້ດຽວ | 0973/ຈທວ | 11/05/2012 | |
| 4 | ບໍລິສັດ ວ້ານລີ ລົງທຶນສາກົນ ຈຳກັດຜູ້ດຽວ | 0960/ຈທວ | 10/05/2012 | |
| 5 | ບໍລິສັດ ເອສເອສພີທີ ພັດທະນາບໍ່ແຮ່ ຈຳກັດ | 2454/ຈທວ | 16/3/2009 | |
| 6 | ບໍລິສັດ ວ້ານເຈ່ຍຫຼົງ ລາວ ການຄ້າ ຈຳກັດຜູ້ດຽວ | 0813/ຈທວ | 19/04/2012 | |
| 7 | ບໍລິສັດ ໄທສີ ປະກັນໄພ (ລາວ) ຈຳກັດ | 0905/ຈທວ | 27/04/2012 | |
| 8 | ບໍລິສັດ ຈິງນານ ຮ່ວມທຶນ ຈຳກັດ | 0325/ຈທວ | 08/06/2013 | |
| 9 | ບໍລິສັດ ຫຼົງເຖິງ ລ້ຽງສັດ ຈຳກັດ | 1382/ຈທວ | 22/10/2012 | |
| 10 | ບໍລິສັດ ລາວ-ຈີງທາວງຜະລິດແກ້ວນິລະໄພ ຈຳກັດຜູ້ດຽວ | 1463/ຈທວ | 30/11/2012 | |
| 11 | ບໍລິສັດ ເດລີມ້າ ອອຍ ໂປຣດັກລາວ ຈຳກັດ | 1492/ຈທວ | 21/12/2012 | |
| 12 | ບໍລິສັດ ຊຽງຈີງ ກໍ່ສ້າງ ຈຳກັດຜູ້ດຽວ | 0218/ຈທວ | 26/04/2013 | |
| 13 | ບໍລິສັດ ລາວພັດທະນາວັດຖຸດິບ ຈຳກັດ | 0515/ຈທວ | 11/09/2013 | |
| 14 | ບໍລິສັດ ແອວເຈ ກໍ່ສ້າງເຄຫາສະຖານ ແລະ ຂົວ-ທາງ ຈຳກັດຜູ້ດຽວ | 0415/ຈທວ | 30/07/2013 | |
| 15 | ບໍລິສັດ ລາວ ຕົງຟາງ ກໍ່ສ້າງ ຈຳກັດ | 2326/ຈທວ | 16/06/2010 | |
| 16 | ທະນາຄານ ມັນບີສະວອນພີແອວຊີ ຈຳກັດ | 1156/ຈທວ | 13/07/2012 | |
| 17 | ທະນາຄານ ເຊັນຊາ ຈຳກັດ | 0279/ຈທວ | 24/02/2012 | |
| 18 | ບໍລິສັດ ຮຸຍຈິນ ການຄ້າສາກົນ ຈຳກັດຜູ້ດຽວ | 0972/ຈະວ | 11/05/2012 | |
| 19 | ບໍລິສັດ ຢົງຊິນ ການຄ້າສາກົນ ຈຳກັດຜູ້ດຽວ | 0975/ຈທວ | 11/05/2012 | |
| 20 | ບໍລິສັດ ເພກາເບ-ໄຮກາລີ ຈຳກັດ | 0866/ຈທວ | 25/04/2012 | |
| 21 | ບໍລິສັດ ວຽງຈັນພັດທະນາ ຈຳກັດ | 0715/ຈທວ | 06/04/2012 | |
| 22 | ບໍລິສັດ ດາວ ຮາຍເປີແມັນ ຢູນີເມັກສ໌ ຈຳກັດ | 4472/ຈທວ | 13/12/2012 | |
| 23 | ບໍລິສັດ ຖາຍເຢືອງຮຸ້ນສ່ວນບໍລິການສຳຫຼວດ, ຂຸດຄົ້ນ ແລະ ວິໄຈແຮ່ທາດ | 5853/ຈທວ | 28/05/2009 | |
| 24 | ບໍລິສັດ ບໍ່ແຮ່ ລາວທຽນຟູ ຈຳກັດ | 5255/ຈທວ | 12/05/2009 | |
| 25 | ບໍລິສັດ ຂຸດຄົ້ນບໍ່ແຮ່ຮ່ວາງຟາດ ຈຳກັດ | 6933/ຈທວ | 06/07/2009 | |
| 26 | ບໍລິສັດ ລາວ-ຕຸນຮົງ ກໍ່ສ້າງ ຈຳກັດ | 0965/ຈທວ | 10/05/2012 | |
| 27 | ບໍລິສັດ ເຮືອໄຟຕາວັນລາວ ຈຳກັດ | 1476/ທຈທ | 18/12/2008 | |

ແຈ້ງມາເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ຫຸມແພງ ຄຳພາສິດ

Houmpheng KHAMPHASITH

ບ່ອນສົ່ງ

- ຫ້ອງວ່າການລັດຖະບານ 1 ສະບັບ;
- ກົມສວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ 1 ສະບັບ;
- ຫ້ອງວ່າການນະຄອນຫຼວງ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ສຳເນົາ 1 ສະບັບ.